ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ທະນາຄານແຫ່ງ ສປປ ລາວ
ກົມຄຸ້ມຄອງສະຖາບັນການເງິນ

ເລກທີ 108/ກຄສງ

ນະຄອນຫຼວງວຽງຈັນ, ວັນທີ 27 ເມສາ 2021

# ແຈ້ງການ

ເຖິງ: - ທ່ານ ຜູ້ອໍານວຍການ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ;
- ທ່ານ ຜູ້ອໍານວຍການ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ;
- ທ່ານ ຜູ້ອໍານວຍການ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ;
- ທ່ານ ຜູ້ອໍານວຍການ ບໍລິສັດ ເຊົ່າສິນເຊື່ອ;
- ທ່ານ ຜູ້ອໍານວຍການ ໂຮງຊວດຈໍາ.

**ເລື່ອງ:** ກ່ຽວກັບການເພີ່ມທະວີມາດຕະການເພື່ອຮອງຮັບຜົນກະທົບຈາກ ສະພາບການແຜ່ລະບາດຂອງພະຍາດ COVID – 19.

- ອີງຕາມ ຄໍາສັ່ງຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021 ວ່າດ້ວຍການເພີ່ມມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອດດ້ານເພື່ອຕ້ານພະຍາດ COVID–19;
- ອີງຕາມ ຂໍ້ຕົກລົງຂອງຜູ້ວ່າການທະນາຄານແຫ່ງ ສປປ ລາວ ວ່າດ້ວຍນະໂຍບາຍສິນເຊື່ອ ເພື່ອແກ້ໄຂຜົນກະທົບຈາກສະພາບການລະບາດຂອງພະຍາດ COVID–19 ສະບັບເລກທີ 238/ທຫລ, ລົງວັນທີ 26 ມີນາ 2020;
- ອີງຕາມ ແຈ້ງການຂອງຫ້ອງການ ທະນາຄານແຫ່ງ ສປປ ລາວ ສະບັບເລກທີ 86/ຫກ, ລົງວັນທີ 22 ເມສາ 2021 ໃຫ້ເອົາໃຈໃສ່ໃນການເພີ່ມທະວີມາດຕະການປ້ອງກັນ ແລະ ຄວບຄຸມການແຜ່ລະບາດຂອງພະຍາດ COVID–19 ຮອບດ້ານໃນຂະແໜງການທະນາຄານ.

ກົມຄຸ້ມຄອງສະຖາບັນການເງິນ, ທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງທ່ານ ໃຫ້ເພີ່ມທະວີຄວາມເປັນເຈົ້າການໃນການປ້ອງກັນການແຜ່ລະບາດຂອງພະຍາດ COVID-19 ຢູ່ໃນສະຖາບັນການເງິນຂອງຕົນ ຕາມຄໍາສັ່ງຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ ແລະ ແຈ້ງການຂອງຫ້ອງການທະນາຄານແຫ່ງ ສປປ ລາວ ສະບັບເລກທີ 86/ຫກ, ຊຶ່ງຕ້ອງໄດ້ເອົາໃຈໃສ່ ແລະ ສືບຕໍ່ຈັດຕັ້ງປະຕິບັດໃນການໃຫ້ບໍລິການແກ່ລູກຄ້າດັ່ງນີ້:

1. ໃຫ້ບໍລິການແກ່ລູກຄ້າດ້ວຍຊ່ອງທາງຕ່າງໆ ຢ່າງເໝາະສົມ ແລະ ທົ່ວເຖິງ;



ທະນາຄານແຫ່ງ ສປປ ລາວ, ຖະໜົນ ຢອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 BNL.VTE.LS
ໂທລະສານ: (856)-21-213108 ໂທລະສັບ: 213109-213110 Email: BOL@bol.gov.la; www.bol.gov.la

2. ສ້າງແຜນສຳຮອງໃນການໃຫ້ບໍລິການແກ່ລູກຄ້າ ເພື່ອຮອງຮັບກໍລະນີຈຳເປັນຕາມມາດຕະການຄວບຄຸມ ແລະ ປ້ອງກັນພະຍາດໂຄວິດ 19 ທີ່ໄດ້ກຳນົດໄວ້;
3. ສ້າງກົນໄກ ແລະ ນະໂຍບາຍ ຕໍ່ກັບການຕິດຕາມ ແລະ ການລາຍງານ ປະກົດການຄວາມສ່ຽງຕໍ່ກັບການຕິດເຊື້ອຂອງພະນັກງານ, ໂດຍການກັກຕົວຕິດຕາມອາການ, ກວດປະເມີນຜົນຢູ່ຈຸດກວດ ແລະ ຮັບການປິ່ນປົວທີ່ພາກສ່ວນກ່ຽວຂ້ອງໄດ້ກຳນົດຢ່າງທັນການ;
4. ປະຕິບັດມາດຕະການປ້ອງກັນ ແລະ ຄວບຄຸມຢ່າງເຂັ້ມງວດ ຢູ່ສຳນັກງານໃຫຍ່, ສາຂາ ແລະ ໜ່ວຍບໍລິການ ຊຶ່ງທີ່ຕັ້ງດັ່ງກ່າວ ຢູ່ໃກ້ສະຖານທີ່ທີ່ພາກລັດກຳນົດເປັນເຂດສ່ຽງ ໂດຍພິຈາລະນາປັບປຸງເວລາການໃຫ້ບໍລິການ ຫຼື ໂຈະການໃຫ້ບໍລິການຢູ່ສະຖານທີ່ດັ່ງກ່າວຊົ່ວຄາວ ແລະ ມາດຕະການອື່ນໆຕາມຄວາມເໝາະສົມ;
5. ລາຍງານການປະຕິບັດນະໂຍບາຍຕໍ່ລູກຄ້າ, ປະກົດການຄວາມສ່ຽງການຕິດເຊື້ອຂອງລູກຄ້າ ແລະ ພະນັກງານຂອງສະຖາບັນການເງິນຂອງຕົນ ມາຍັງກົມຄຸ້ມຄອງສະຖາບັນການເງິນ ເພື່ອຊາບແຕ່ລະໄລຍະຢ່າງທັນການ.

ດັ່ງນັ້ນ, ຈຶ່ງອອກແຈ້ງການສະບັບນີ້ມາຍັງທ່ານເພື່ອຊາບ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

ຮຼ. ຫົວໜ້າກົມ

ທະນາຄານ ແຫ່ງ ສປປ ລາວ
ກົມຄຸ້ມຄອງສະຖາບັນການເງິນ

ວິໄລມິດ ອັກຄະວົງ